## I. ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ແມ່ນຫຍັງ SPS?

ພາຍໃຕ້ສັນຍາວ່າດ້ວຍການນຳໃຊ້ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ SPS ຫມາຍເຖິງມາດຕະການໃດ ຫນຶ່ງທີ່ວາງອອກໂດຍ ຂະແຫນງການກ່ຽວຂ້ອງຂອງລັດຖະບານ.

| ປົກປ້ອງ | ຈາກ |
|---|---|
| **ສຸຂະພາບ ຫຼື ຊີວິດຂອງຄົນ ຫຼື ສັດ** | ຄວາມສ່ຽງເກີດຈາກທາດເພີ່ມ, ສານປົນເປື້ອນ, ສານພິດ, ຫຼື ເຊື້ອພະຍາດໃນອາຫານ, ເຄື່ອງດື່ມແລະອາຫານສັດ. |
| **ຊີວິດ ຫຼື ສຸຂະພາບຂອງຄົນ** | ຄວາມສ່ຽງເກີດຈາກພືດຫຼືສັດຫຼືສິນຄ້າຜະລິດຈາກພືດຫຼືສັດດັ່ງກ່າວທີ່ນຳເຊື້ອພະຍາດສູ່ຄົນ, ຫຼືຈາກການນຳເຂົ້າມາ, ການເກີດ ຫຼື ແຜ່ລະບາດຂອງແມງໄມ້. |
| **ຊີວິດ ຫຼື ສຸຂະພາບຂອງສັດ ຫຼື ພືດ** | ຄວາມສ່ຽງຈາກການນຳເຂົ້າມາ, ການເກີດ ຫຼື ແຜ່ລະບາດຂອງສັດຕູພືດ, ພະຍາດ, ສິ່ງທີ່ມີຊີວິດທີ່ນຳເຊື້ອພະຍາດ, ເຊື້ອພະຍາດ. |
| **ປະເທດ** | ຄວາມເສຍຫາຍອື່ນໆຈາກການເຂົ້າມາ, ການເກີດ ຫຼືແຜ່ລະບາດຂອງສັດ ຕູພືດ. |

**ມາດຕະການ**ດັ່ງກ່າວກວມເອົາທັງກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ລະບຽບການ, ເງື່ອນໄຂ ແລະ ລວມທັງຂັ້ນຕອນການກວດກາ, ການເກັບຕົວຢ່າງ, ການຢັ້ງຢືນ ແລະ ການອອກອະນຸມັດຕ່າງໆ ເພື່ອບັນລຸເປົ້າໝາຍປົກປ້ອງດັ່ງທີ່ກ່າວມາ.

## II. ສັນຍາສຸຂານາໄມ ແລະ ສຸຂານາໄມພືດ ຫຼື ສັນຍາ SPS ຂອງອົງການການຄ້າໂລກ

ໃນອົງການການຄ້າໂລກເອີ້ນວ່າສັນຍາວ່າດ້ວຍການນຳໃຊ້ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ (Agreement on the Application of Sanitary and Phytosanitary Measures) ຊຶ່ງອະນຸຍາດໃຫ້ສະມາຊິກສາມາດນຳໃຊ້ມາດຕະການເພື່ອປົກປ້ອງສຸຂະພາບຫຼືຊີວິດຂອງຄົນ, ສັດແລະພືດ, ແຕ່ຕ້ອງຫຼີກເວັ້ນການຈຳກັດການຄ້າໃຫ້ໜ້ອຍທີ່ສຸດ. ໂດຍມີເງື່ອນໄຂ ແລະ ຫຼັກການສຳຄັນດັ່ງນີ້:

### 1) <u>ອີງໃສ່ພື້ນຖານວິທະຍາສາດເປັນຫຼັກ.</u>

ທຸກມາດຕະການທີ່ວາງອອກເພື່ອປົກປ້ອງສຸຂະພາບຫຼືຊີວິດຂອງຄົນ, ສັດຫຼືພືດນັ້ນຕ້ອງໄດ້ອີງໃສ່ຂໍ້ມູນ ແລະ ຫຼັກຖານທາງວິທະຍາສາດເປັນບ່ອນອີງ.

### 2) <u>ອີງໃສ່ມາດຕະຖານຂອງສາກົນ</u>

ມາດຕະການທີ່ນຳໃຊ້ຕ້ອງອີງໃສ່ມາດຕະຖານຂອງສາກົນ ເຊັ່ນ: ກົດລະຫັດອາຫານສາກົນ (Codex Alimentarius), ມາດຕະຖານຂອງອົງການສຸຂະພາບສັດໂລກ (World Organization of Animal Health: OIE) ແລະ ສົນທິສັນຍາວ່າດ້ວຍການປົກປ້ອງພືດສາກົນ (International Plant Protection Convention: IPPC). ແຕ່ຖ້າບໍ່ມີໃນມາດຕະຖານສາກົນ ຫຼື ມາດຕະຖານພາຍໃນສູງກວ່າສາກົນ ປະເທດດັ່ງກ່າວຕ້ອງມີການປະເມີນຄວາມສ່ຽງ ແລະ ຊີ້ແຈງບົນພື້ນຖານວິທະຍາສາດ.

### 3) ຮັບຮູ້ຄວາມເທົ່າທຽມກັນ

ສັນຍາຮຽກຮ້ອງໃຫ້ທຸກໆປະເທດສະມາຊິກຕ້ອງມີການຮັບຮູ້ລະບຽບການເຕັກນິກຊຶ່ງກັນແລະກັນ ເຖິງແມ່ນວ່າລະບຽບການເຕັກນິກຈະມີຄວາມແຕກຕ່າງກັນກໍ່ຕາມ, ປະເທດນຳເຂົ້າຕ້ອງຮັບຮູ້ລະບຽບການເຕັກນິກຂອງປະເທດສົ່ງອອກຖ້າຫາກສາມາດພິສູດໄດ້ວ່າລະບຽບການເຕັກນິກດັ່ງກ່າວສາມາດບັນລຸໄດ້ຕາມລະດັບການປົກປ້ອງທີ່ຕ້ອງການຂອງປະເທດນຳເຂົ້າ.

### 4) <u>ຮັບປະກັນຄວາມໂປ່ງໃສ</u>

ຫມາຍເຖິງໃຫ້ພາກສ່ວນກ່ຽວຂ້ອງສາມາດເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງແລະ ສາມາດມີສ່ວນຮ່ວມໃນການປະກອບຄຳເຫັນໃນໄລຍະເວລາທີ່ແນ່ນອນ ແລະ ມາດຕະການທີ່ຈະບັງຄັບໃຊ້ຕ້ອງໄດ້ເຜີຍແຜ່ຢ່າງໜ້ອຍ 180 ວັນ.

### 5) <u>ຮັບປະກັນບໍ່ມີການຈຳແນກປະຕິບັດ(Non-Discrimination)</u>

ການວາງ ແລະ ນຳໃຊ້ມາດຕະການຕ້ອງບໍ່ມີການຈຳແນກປະຕິບັດແບບໄຮ້ເຫດຜົນລະຫວ່າງສິນຄ້ານຳເຂົ້າດ້ວຍກັນ ແລະ ລະຫວ່າງສິນຄ້ານຳເຂົ້າ ແລະ ສິນຄ້າຜະລິດພາຍໃນ.

### 6) <u>ເງື່ອນໄຂອື່ນໆ (ລາຍລະອຽດເບິ່ງໄດ້ທີ່ www.laoftpd.com)</u>

## III. ສົນຍາ SPS ແລະ ການເຂົ້າເຖິງຕະຫຼາດຄ້າສາກົນ

ສິນຄ້າປະເພດກະສິກຳ ເຊັ່ນ: ພືດຜັກ, ຊີ້ນສັດ, ເຂົ້າ, ມັນອື່ນໆ ລວມທັງຜະລິດຕະພັນສຳເລັດຮູບຕ່າງໆ ຄື: ເຫຼົ້າ, ເຄື່ອງດື່ມ ແລະ ເຄື່ອງບໍລິໂພກອື່ນໆໃນການຄ້າສາກົນໃນປັດຈຸບັນລ້ວນແຕ່ຈະຖືກຄຸ້ມຄອງ ແລະ ກ່ຽວຂ້ອງກັບມາດຕະການ SPS. ຕົວຢ່າງ: ການສົ່ງງົວໄປຫວຽດນາມ ເຈົ້າໜ້າທີ່ທີ່ດ່ານຈະຮຽກຮ້ອງຜູ້ສົ່ງອອກງົວສະໜອງເອກະສານຢັ້ງຢືນສຸຂະພາບຂອງງົວໂດຍອີງຕາມມາດຕະຖານຂອງອົງການ OIE. ເງື່ອນໄຂນຳເຂົ້າຂອງຫວຽດນາມ ທີ່ຮຽກຮ້ອງໃບຢັ້ງຢືນສຸຂະພາບຕາມມາດຕະຖານສາກົນແມ່ນສອດຄ່ອງກັບສົນຍາ SPS, ແຕ່ການທີ່ຜູ້ສົ່ງອອກຂອງລາວຈະປະຕິບັດຕາມເງື່ອນໄຂດັ່ງກ່າວໄດ້ຜູ້ສົ່ງອອກບໍ່ສາມາດປະຕິບັດໄດ້ຕາມລຳພັງ, ຂະແໜງການກ່ຽວຂ້ອງ ເຊັ່ນ ຂະແໜງການກະສິກຳຕ້ອງໄດ້ມີລະບົບຄຸ້ມຄອງສຸຂະພາບທີ່ສອດຄ່ອງກັບສາກົນ ໂດຍມີການຮັບຮອງ (Accreditation) ຈາກອົງການໃດໜຶ່ງທີ່ສາກົນຮັບຮູ້.

ສົນຍາ SPS ໄດ້ເຮັດໃຫ້ການຄ້າສິນຄ້າກະສິກຳໃນປັດຈຸບັນກາຍເປັນການຄ້າທີ່ຕ້ອງມີລະບົບຊັບຊ້ອນ ໂດຍຕ້ອງມີການປະສານງານພາຍໃນ ແບະ ພາຍນອກຢ່າງເປັນເອກະພາບ ຂະແໜງການຄ້າ, ກະສິກຳ, ສາທາລະນະສຸກ, ພາກທຸລະກິດ, ຂະແໜງການຂອງປະເທດຄູ່ຄ້າ, ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງອື່ນໆ ຈຶ່ງຈະສາມາດເຮັດໃຫ້ການຄ້າສິນຄ້າກະສິກຳໃດໜຶ່ງສາມາດເກີດຂຶ້ນໄດ້.

ການຄ້າແບບຊາຍແດນຂອງສປປ ລາວ ນັບມື້ຖືກຈຳກັດຈາກປະເທດໃກ້ຄຽງ, ບາງຄັ້ງອະນຸຍາດ, ບາງຄັ້ງກໍປະຕິເສດນຳເຂົ້າ, ສາເຫດກໍເນື່ອງມາຈາກຜົນບັງຄັບໃຊ້ສົນຍາດັ່ງກ່າວ.

ສປປ ລາວ ຍັງບໍ່ທັນມີລະບົບປະສານງານທີ່ຈຳເປັນຢ່າງດີພໍທີ່ຈະຮັບປະກັນການສົ່ງອອກສິນຄ້າກະສິກຳໃດໜຶ່ງໄດ້ເທື່ອ, ຈຶ່ງເຮັດໃຫ້ມີມີບັນຫາການເຂົ້າເຖິງຕະຫຼາດຂອງສາກົນໃນປັດຈຸບັນ.


ສົນໃຈຂໍ້ມູນເພີ່ມເຕີມ

ກົມນະໂຍບາຍການຄ້າຕ່າງປະເທດ

ກະຊວງອຸດສາຫະກຳ ແລະ ການຄ້າ

Tel/Fax: 021-450066

ອີເມລ: foreigntrade@laoftpd.com

ເວັບໄຊ: www.laoftpd.com



ສະໜັບສະໜູນໂດຍ

USAID FROM THE AMERICAN PEOPLE


# ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ



# Sanitary and Phytosanitary Measures (SPS)